ສຳນັກງານ ຄຄຊ
ເລກທີ 031
ວັນທີ 13.1.15
ໂທລະສັບ 021 217770

PA
- ຈຸ ມ. 13/1/2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ທະນາຄານແຫ່ງ ສ.ປ.ປ.ລາວ
ເລກທີ: 89
ວັນທີ: 8.1.2015
ໂທລະສັບ: 243710

ເລກທີ 0011 /ຄພນ.ອຈພ.
ນະຄອນຫລວງວຽງຈັນ, ວັນທີ 06 Jan 2015

ຮຽນ: ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ທີ່ນັບຖື;
- ບັນດາທ່ານລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ທີ່ນັບຖື.

ເລື່ອງ: ລາຍງານສະພາບການເໜັງຕີງຂອງລາຄາສິນຄ້າທີ່ກະທົບໄວຕໍ່ຊີວິດການເປັນຢູ່ ປະຈຳອາທິດ ຄັ້ງວັນທີ 30/12/2014.

- ອີງຕາມ ຂໍ້ຕົກລົງສະບັບເລກທີ 2250/ອຄ.ຈພງ ລົງວັນທີ 23/10/2012, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການຄ້າພາຍໃນ.
- ອີງຕາມ ການລາຍງານລາຄາສິນຄ້າທີ່ກະທົບໄວຕໍ່ຊີວິດການເປັນຢູ່ປະຈຳອາທິດຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານກ່ຽວກັບສະພາບການເໜັງຕີງລາຄາສິນຄ້າທີ່ກະທົບໄວຕໍ່ຊີວິດການເປັນຢູ່ ຄັ້ງວັນທີ 30/12/2014 ສົມທຽບກັບຄັ້ງວັນທີ 23/12/2014 ລະອຽດດັ່ງລຸ່ມນີ້:

I. <u>ລາຄາສິນຄ້າເພີ່ມຂຶ້ນ</u>

\+ ຢູ່ແຂວງ ບໍລິຄຳໄຊ

1) ປະເພດເຂົ້າສານ

- ເຂົ້າສານໜຽວລາວທີ 1: ຈາກລາຄາ 6,000 ກີບ/ກິໂລ, ເປັນ 6,250 ກີບ/ກິໂລ; ເພີ່ມຂຶ້ນ 250 ກີບ/ກິໂລ.
- ເຂົ້າສານໜຽວລາວທີ 2: ຈາກລາຄາ 5,600 ກີບ/ກິໂລ, ເປັນ 5,833 ກີບ/ກິໂລ; ເພີ່ມຂຶ້ນ 233 ກີບ/ກິໂລ.
- ເຂົ້າສານຈ້າວລາວທີ 1: ຈາກລາຄາ 6,500 ກີບ/ກິໂລ, ເປັນ 7,000 ກີບ/ກິໂລ; ເພີ່ມຂຶ້ນ 500 ກີບ/ກິໂລ.

ສາເຫດທີ່ລາຄາເຂົ້າສານໜຽວ ແລະ ເຂົ້າສານຈ້າວລາວ ມີລາຄາເໜັງຕີງເພີ່ມຂຶ້ນນັ້ນ ເນື່ອງຈາກວ່າເປັນເຂົ້າທີ່ຊື້ມາຈາກຕ່າງແຂວງເພື່ອຈຳໜ່າຍຢູ່ພາຍໃນ, ສະນັ້ນ ຈຶ່ງມີລາຄາສູງຂຶ້ນເລັກໜ້ອຍຕາມຕົ້ນທຶນຊື້.

2) ປະເພດເຫຼັກເສັ້ນ

- ເຫຼັກເສັ້ນປ່ອງອ້ອຍລາວ ພີ 12 ປະເພດ 1: ຈາກລາຄາ 5,600,000 ກີບ/ໂຕນ, ເປັນ 5,800,000 ກີບ/ໂຕນ; ເພີ່ມຂຶ້ນ 200,000 ກີບ/ໂຕນ
- ເຫຼັກເສັ້ນປ່ອງອ້ອຍລາວ ພີ 12 ປະເພດ 2: ຈາກລາຄາ 3,900,000 ກີບ/ໂຕນ, ເປັນ 4,000,000 ກີບ/ໂຕນ; ເພີ່ມຂຶ້ນ 100,000 ກີບ/ໂຕນ

ສາເຫດທີ່ລາຄາເຫຼັກເສັ້ນລາວ ມີການປັບລາຄາຂຶ້ນ ເນື່ອງຈາກວ່າ ໄລຍະນີ້ເປັນໄລຍະທີ່ມີການຊົມໃຊ້ສິນຄ້າປະເພດດັ່ງກ່າວຫຼາຍ, ແຕ່ວັດຖຸດິບທີ່ມາປ້ອນໂຮງງານພັດມີຈຳນວນຈຳກັດ, ສະນັ້ນ ຈຶ່ງເຮັດໃຫ້ລາຄາເຫຼັກເສັ້ນມີລາຄາເພີ່ມຂຶ້ນ.

II. ລາຄາສິນຄ້າຫຼຸດລົງ

+ນະຄອນຫຼວງ

1) ປະເພດຊີ້ນ

- ລາຄາຊີ້ນໝູປະເພດ 2: ຈາກລາຄາ 38,000 ກີບ/ກິໂລ ເປັນ 36,000 ກີບ/ກິໂລ; ຫຼຸດລົງ 2,000 ກີບ/ກິໂລ

ສາເຫດທີ່ລາຄາຊີ້ນໝູປະເພດ 2 ຫຼຸດລົງ ຍ້ອນວ່າ ການໃຫ້ຄວາມຮ່ວມມືກັບພາກລັດ (ພະແນກ ອຄ ນະຄອນຫຼວງ) ຂອງຊາວຄ້າຂາຍ ໃນການປະຕິບັດລາຄາຕາມໂຄງປະກອບລາຄາທີ່ສ່ອງແສງເຖິງຄວາມເປັນຈິງໄດ້ດີຂຶ້ນ.

2) ປະເພດນ້ຳມັນເຊື້ອໄຟ

ລາຄານ້ຳມັນເຊື້ອໄຟໃນທົ່ວປະເທດໄດ້ປັບລາຄາຫຼຸດລົງຕາມການແຈ້ງການເລກທີ 2282/ອຄ.ຄພນ, ລົງວັນທີ 18/12/2014. ໃນນັ້ນ; ຢູ່ນະຄອນຫຼວງວຽງຈັນລາຄານ້ຳມັນເຊື້ອໄຟແຕ່ລະຊະນິດມີດັ່ງນີ້:

- ນ້ຳມັນແອັດຊັງພິເສດຈາກລາຄາ 10,790 ກີບ/ລິດ ເປັນ 10,540 ກີບ/ລິດ; ຫຼຸດລົງ 250 ກີບ/ລິດ.
- ແອັດຊັງທຳມະດາ ຈາກລາຄາ 9,460 ກີບ/ລິດ ເປັນ 9,240 ກີບ/ລິດ; ຫຼຸດລົງ 220 ກີບ/ລິດ.
- ກາຊວນ ຈາກລາຄາ 8,420 ກີບ/ລິດ ເປັນ 8,240 ກີບ/ລິດ; ຫຼຸດລົງ 180 ກີບ/ລິດ.

ສ່ວນຢູ່ຈຸດອື່ນໆ ກໍໄດ້ປັບລາຄາລົງຕາມໄລຍະທາງການຂົນສົ່ງ ດັ່ງເອກະສານຊ້ອນທ້າຍຄັດຕິດມາພ້ອມນີ້.

ສາເຫດທີ່ນ້ຳມັນເຊື້ອໄຟມີລາຄາຫຼຸດລົງຍ້ອນວ່າ: ສະພາບການຊື້-ຂາຍລາຄານ້ຳມັນໃນຕະຫຼາດໂລກແມ່ນມີການປັບລາຄາຫຼຸດລົງ, ໂດຍອີງຕາມສະພາບເສດຖະກິດ ແລະ ປະລິມານການຜະລິດຂອງປະເທດຜູ້ສົ່ງອອກນ້ຳມັນເປັນຫຼັກ.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານມາຍັງທ່ານເພື່ອຊາບ.

ຫົວໜ້າກົມການຄ້າພາຍໃນ

ບຸນທຽມ ແກ້ວສີພາ

8/1/2015

ພາສີ ພິມມະກອນ

- ບ່ອນສົ່ງ:
- ຫ້ອງວ່າການສູນກາງພັກ 01 ສະບັບ, "ເພື່ອລາຍງານ"
- ສະພາແຫ່ງຊາດ(ຄະນະກຳມະການເສດຖະກິດ) 01 ສະບັບ, "ເພື່ອລາຍງານ"
- ຫ້ອງວ່າການລັດຖະບານ(ກົມສັງລວມເສດຖະກິດ) 01 ສະບັບ, "ເພື່ອລາຍງານ"
- ກະຊວງ ກະສິກຳ ແລະ ປ່າໄມ້ 01 ສະບັບ, "ເພື່ອຊາບ"
- ກະຊວງແຜນການ ແລະ ການລົງທຶນ 02 ສະບັບ, "ເພື່ອຊາບ ແລະ ເປັນຂໍ້ມູນ"

(ກົມສະຖິຕິ ແລະ ພະແນກເສດຖະກິດມະຫາພາກ)

- ທະນາຄານແຫ່ງ ສປປລ 01 ສະບັບ, "ເພື່ອຊາບ"
- ບັນດາກົມກ່ຽວຂ້ອງອ້ອມຂ້າງ ກະຊວງ ອຄ 03 ສະບັບ, "ເພື່ອຊາບ"

(ຫ້ອງການ, ກົມແຜນການ ແລະ ການຮ່ວມມື ແລະ ສະຖາບັນຄົ້ນຄ້ວາເສດຖະກິດ ແລະ ການຄ້າ)

- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ 01 ສະບັບ, "ເພື່ອຊາບ"
- ບັນດາແຂວງທີ່ກ່ຽວຂ້ອງກັບບົດລາຍງານແຂວງລະ 01ສະບັບ, "ເພື່ອຊາບ"